ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 23/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2025

# ແຈ້ງການ

**ເຖິງ:** ບັນດາບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງຂໍຮັບຮອງເປັນ ບໍລິສັດປະເມີນມູນຄ່າຊັບສິນ, ທີ່ນັບຖື.

**ເລື່ອງ:** ການອະນຸຍາດໃຫ້ສືບຕໍ່ເປີດການຂໍຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວຂອງ ສຳນັກຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 05/ຄຄຊ, ລົງວັນທີ 29 ເມສາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຮັບຮອງບໍລິສັດປະເມີນຊັບສິນ (ສະບັບປັບປຸງ) ສະບັບເລກທີ 10/ຄຄຊ, ລົງວັນທີ 22 ກໍລະກົດ 2022;
- ອີງຕາມ ແຈ້ງການຂອງ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 674/ຫສນຍ, ລົງວັນທີ 24 ເມສາ 2025.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນເມື່ອກ່ອນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ມີການອອກແຈ້ງການໂຈະກ່ຽວກັບ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ ເປັນການຊົ່ວຄາວ ຊຶ່ງມາຮອດປະຈຸບັນນີ້ ອີງຕາມທິດຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ແລະ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະ ບັບເລກທີ 674/ຫສນຍ, ລົງວັນທີ 24 ເມສາ 2025. ສຄຄຊ ຈຶ່ງໄດ້ອະນຸຍາດໃຫ້ສືບຕໍ່ ການຂໍຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ ຄືນໃໝ່ ນັບແຕ່ ເດືອນ ມິຖຸນາ 2025 ເປັນຕົ້ນໄປ. ໂດຍໃຫ້ບໍລິສັດປະເມີນມູນຄ່າຊັບສິນທີ່ມີຈຸດປະສົງຂໍການຮັບຮອງເປັນ ບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ ຕ້ອງມີເງື່ອນໄຂ ແລະ ເອກະສານປະກອບທີ່ຄົບຖ້ວນ ແລະ ຖືກຕ້ອງ ຕາມການກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍ ການຮັບຮອງບໍລິສັດປະເມີນຊັບສິນ (ສະບັບປັບປຸງ) ສະບັບເລກທີ 10/ຄຄຊ, ລົງວັນທີ 22 ກໍລະກົດ 2022 ແລະ ຍື່ນຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຄົ້ນຄວ້າ ແລະ ພິຈາລະນາຮັບຮອງ.

ແຈ້ງການສະບັບນີ້ ນຳໃຊ້ປ່ຽນແທນ ເນື້ອໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 70/ສຄຄຊ, ລົງວັນທີ 04 ກັນຍາ 2020 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າສຳນັກງານ**

ແພງສີ ແພງເມືອງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ເລກທີ 674/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2025

# ແຈ້ງການ

**ຮຽນ:** - ທ່ານ ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.

- ທ່ານ ຮັກສາການຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ທີ່ນັບຖື.

**ເລື່ອງ:** ທິດຊີ້ນຳ ກ່ຽວກັບການອອກໃບອະນຸຍາດ ແລະ ຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງທະນາຄານ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ເອກະສານລາຍງານ ຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 38/ທຫລ, ລົງວັນທີ 12 ມີນາ 2025.
- ອີງຕາມ ທິດຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 18 ເມສາ 2025.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: **"ເຫັນດີອະນຸມັດໃຫ້ທະນາຄານ ແຫ່ງ ສປປ ລາວ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງອອກໃບອະນຸຍາດ ແລະ ຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງທະນາຄານ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການສະເໜີ".**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

**ລັດຖະມົນຕີ,**

**ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ບໍອນສົ່ງ

| | |
|---|---|
| 1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ | 05 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ຫ້ອງວ່າການສຳນັກງານປະທານປະເທດ | 01 ສະບັບ |
| 4. ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 5. ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 6. ສຳເນົາ | 04 ສະບັບ |

ບົວຄົງ ນາມມະວົງ